# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 4 -ມິຖຸນາ- 2006 (6-4-006)

## ກາເຫລັບ: ຄວາມເຊື່ອທີ່ຄົງທົນຕລອດໄປ

**ຂໍ້ພຣະຄັມພີໃນບົດຮຽນ:** ຈົດເຊັນບັນຊີ 13:30; 14:6-9; ໂຢຊວຍ 14:6-14

**ພຣະຄັມພີແຫ່ງຄວາມຈິງ:** ຜູ້ທີ່ມີຄວາມເຊື່ອໄດ້ໄວ້ວາງໃຈໃນພຣະເຈົ້າຢ່າງສຸດຈິດສຸດໃຈ ຈະມີຄວາມເຊື່ອອັນແຂງແກ່ນຕລອດຊົ່ວຊີວິດຂອງລາວ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ອອກແບບເພື່ອຊ່ວຍເສີມສ້າງຄວາມເຊື່ອຂອງທ່ານໃຫ້ແຂງແກ່ນ ແລະຄົງທົນຕລອດໄປ:

- ♦ ທຳຄວາມເຂົ້າໃຈໃນການດຳເນີນຊີວິດທີ່ມີຄວາມເຊື່ອອັນຄົງທົນຕລອດໄປ ແມ່ນຈິດໃຈທີ່ໄວ້ວາງໃຈໃນພຣະເຈົ້າຢ່າງສຸດຈິດສຸດໃຈ; ແລະ
- ♦ ມອບຈິດໃຈໄວ້ວາງໃຈໃນພຣະເຈົ້າຢ່າງສຸດຈິດສຸດໃຈແຕ່ລະວັນໃນຊີວິດຂອງທ່ານ.

## ຂ້າພະເຈົ້າຈະສາມາດໄວ້ວາງໃຈໃນພຣະເຈົ້າຢ່າງສຸດຈິດສຸດໃຈແຕ່ລະວັນໄດ້ຢ່າງໃດ?

ໃນບໍ່ນານມານີ້ ຂ້າພະເຈົ້າໄດ້ໄປຮ່ວມງານການປະກາດຢູ່ອິນໂດເນເຊັຽ ຂ້າພະເຈົ້າໄດ້ໄປພົບກັບຊາວເກາະຄົນນຶ່ງ (ຂ້າພະເຈົ້າໃສ່ຊື່ໃຫມ່ໃຫ້ລາວວ່າທ້າວແຊມ ເພື່ອຄວາມປອດພັຍຂອງລາວ.) ລາວເປັນຄົນຫນຸ່ມ ລາວຂີ່ຣົດຈັກໄປປະກາດຂ່າວປະເສີດຕາມເກາະຕ່າງໆ. ການໃຊ້ຈ່າຍໃນການປະກາດນັ້ນຕົກແລ້ວ ປະມານສີ່ຮ້ອຍຫລຽນດອນລາ. ລາວໄດ້ຮັບພຽງແຕ່ນຶ່ງສ່ວນສີ່ຂອງເງິນຈຳນວນສີ່ຮ້ອຍຫລຽນເທົ່ານັ້ນ.

ລາວເວົ້າວ່າ "ພຣະເຈົ້າເພິ່ນເບິ່ງແຍງຂ້ອຍໃນສິ່ງທີ່ຂ້ອຍຕ້ອງການ." "ບາງຄັ້ງຂ້ອຍກໍບໍ່ຮູ້ວ່າອາຫານຄາບຫນ້າຈະໄດ້ມາຈາກໃສ ແຕ່ພຣະເຈົ້າຊົງປະທານໃຫ້ຂ້ອຍຢູ່ບໍ່ຂາດ." ພຣະເຈົ້າຊົງອວຍພອນຊາຍຫນຸ່ມຄົນນີ້ ໃນຂນະທີ່ລາວໃຊ້ຊີວິດຢູ່ໃນຄວາມເຊື່ອ.

ທ້າວແຊມໃຊ້ຊີວິດທີ່ມີຄວາມເຊື່ອແບບນີ້ໄດ້ຢ່າງໃດ? ໃນບົດຮຽນຂອງມື້ນີ້ ກາເຫລັບຈະສອນພວກເຮົາວ່າ ພວກເຮົາຈະຕ້ອງໄວ້ວາງໃຈໃນພຣະເຈົ້າຢູ່ສເມີ ຖ້າພວກເຮົາຢາກໃຫ້ຄວາມເຊື່ອຂອງພວກເຮົາເຂັ້ມແຂງ. ພຣະເຈົ້າຊົງໃຫ້ກຽດໃນຄວາມເຊື່ອຢ່າງນີ້.

## ສຶກສາພຣະຄັມພີ

### 1. ປະເຊີນກັບການທ້າທາຍຂອງຄວາມເຊື່ອ (ຈົດເຊັນບັນຊີ 13:30; 14:6-9)

ຄຳເວົ້າຂອງກາເຫລັບ **"ໃຫ້ພວກເຮົາເຂົ້າໂຈມຕີດຽວນີ້ໂລດແລະຍຶດເອົາດິນແດນ ພວກເຮົາມີກຳລັງເຂັ້ມແຂງພໍທີ່ຈະຊະນະພວກເຂົາໄດ້"** ບົ່ງບອກໃຫ້ເຫັນວ່າ ລາວຮູ້ວ່າພຣະເຈົ້າເປັນຜູ້ປະທານໃນສິ່ງທີ່ຕ້ອງການ ເພື່ອໃຫ້ສຳເຣັດໃນຫນ້າທີ່ຊຶ່ງໄດ້ຮັບມອບຫມາຍໃຫ້. ອັນນີ້ບໍ່ແມ່ນຄຳເວົ້າອວດອ້າງເປົ່າໆ ກາເຫລັບຮູ້ພຣະເຈົ້າຂອງລາວດີ ແລະລາວເພິ່ງໃນພຣະອົງ ເມື່ອລາວຕ້ອງການພະລັງແລະການຫນູນໃຈໃນຍາມລາວປະເຊີນກັບການທ້າທາຍ.

ທັມມະຊາດຂອງຄວາມເຊື່ອອັນແທ້ຈິງຈະນຳພວກເຮົາໄປໃນບ່ອນທີ່ພຣະເຈົ້າຊົງຈັດຕຽມໃຫ້. ແທນທີ່ຊາດອິສຣາເອນຈະມຸ້ງໄປສູ່ທາງຫນ້າ ພວກເຂົາຢາກຈະກັບຂຶ້ນໄປສູ່ໃນອະດີດ "ພວກເຮົາກັບຄືນໄປເອຢິບບໍ່ດີກວ່າບໍ່?" (ຈົດເຊັນບັນຊີ 14:3) ພວກເຂົາໄດ້ທຳຮ້າຍອະນາຄົດຂອງພວກເຂົາເອງ. ປາກົດວ່າພວກເຂົາໄດ້ລືມຄວາມທຸກຍາກລຳບາກ

ໃນຄາວເປັນຂ້າທາດຢູ່ໃນປະເທດເອຢິບ ແລະລືມຣິດທານຸພາບອັນອັສຈັນຂອງພຣະເຈົ້າໃນຂນະທີ່ພຣະອົງນຳພວກເຂົາອອກໜີຈາກເອຢິບ.

ບາງທີພວກເຂົາບໍ່ກ້າໄປເຮັດເສິກ. ບາງທີພວກເຂົາຢ້ານຖືກຂ້າໃນສນາມຣົບ ແລະລູກເມັຽຂອງພວກເຂົາກໍຈະຖືກຈັບໄປເປັນຂ້າທາດ ຫລືຖືກຂ້າກໍໄດ້. ການສະແດງອອກຂອງພວກເຂົາໄດ້ທຳຮ້າຍຄວາມເຊື່ອທາງຈິດວິນຍານຂອງພວກລູກຫລານຂອງພວກເຂົາເອງ ໂດຍສອນລູກຫລານຂອງພວກເຂົາບໍ່ໃຫ້ໄວ້ວາງໃຈໃນພຣະເຈົ້າ.

ຮູບຮ່າງແລະເຮື່ອແຮງຂອງຄົນໃນແຜ່ນດິນພຣະສັນຍາ ແລະກຳແພງເມືອງຂ້ອງພວກເຂົາເຮັດໃຫ້ພວກສອດແນມສິບຄົນໃນຈຳນວນສິບສອງຄົນນັ້ນເກີດຄວາມຢ້ານ. ໃນພຣະທັມທີ່ພວກເຮົາຮຽນກັນຢູ່ນີ້ ກາເຫລັບໄດ້ກ່າວຕໍ່ປະຊາຊົນວ່າ "**ຢ່າຊູ້ຢ້ານ**" ຕັ້ງສອງເທື່ອ. ລາວເຫັນສິ່ງທີ່ທ້າທາຍຂອງພວກເຂົາຢູ່ທາງໜ້າ. ລາວ (ແລະໂຢຊວຍ) ເຫັນໃນສິ່ງດຽວກັນກັບພວກສອດແນມສິບຄົນນັ້ນເຫັນ. ເຖິງຢ່າງໃດກໍຕາມ ກາເຫລັບເຊື່ອວ່າພຣະເຈົ້າຊົງໃຫຍ່ກວ່າສິ່ງທີ່ກີດກັ້ນພວກເຂົາຢູ່ນັ້ນ. ລາວໄດ້ເວົ້າຄວາມຈິງທີ່ປະເສີດຫລາຍວ່າ "**ພຣະຜູ້ເປັນເຈົ້າສະຖິດຢູ່ນຳພວກເຮົາ.**"

ຄວາມຢ້ານເປັນສັດຕູຂອງຄວາມເຊື່ອ. ຄວາມຢ້ານເຮັດໃຫ້ຜູ້ທີ່ບໍ່ໄດ້ຮັບຄວາມລອດພົ້ນຈາກການໄວ້ວາງໃຈໃນພຣະເຢຊູ ແລະບໍ່ຍອມຮັບຟັງຄຳພຍານຂອງຜູ້ທີ່ເຊື່ອ. ຄວາມຢ້ານເຮັດໃຫ້ໂບດບໍ່ກ້າພັທນາການຮັບໃຊ້ແລະການປະກາດໃນຂະແໜງໃໝ່ໆ ພວກເຂົາປັກຕາໃສ່ແຕ່ສິ່ງທີ່ພວກເຂົາມີ ແທນທີ່ຈະໄວ້ວາງໃຈໃນພຣະເຈົ້າອົງຊົງປະທານທຸກສິ່ງທີ່ພວກເຂົາຕ້ອງການໃນການປະກາດແລະຮັບໃຊ້. ຄວາມຢ້ານເຮັດໃຫ້ຫລາຍຄົນບໍ່ກ້າໃຊ້ພອນສວັນຂອງຕົນ.

ກາເຫລັບແລະໂຢຊວຍໜູນໃຈໃຫ້ປະຊາຊົນໄວ້ວາງໃຈໃນພຣະເຈົ້າກັບພວກເຂົາ. ໜ້າເສົ້າໃຈຫລາຍພວກເຂົາໄປຟັງຄຳໃຫ້ການຂອງພວກສອດແນມສິບຄົນນັ້ນ. ພວກເຂົາຄິດສລູບໄປວ່າ ສຽງສ່ວນຫລາຍຈະຕ້ອງເປັນສຽງທີ່ມີເຫດຜົນຫລາຍກວ່າ. ເມື່ອໃດພວກເຮົາໄປຟັງມະນຸດແທນທີ່ຈະຟັງພຣະເຈົ້າ ເມື່ອນັ້ນພວກເຮົາຈະໄດ້ຮັບຄວາມທຸກ. ກາເຫລັບຮູ້ດີເໝືອນກັນກັບເປໂຕແລະພວກອັຄສາວົກທັງຫລາຍໃນສັຕວັດແລກ "ພວກຜູ້ຂ້າຈຳຕ້ອງປະຕິບັດຕາມທີ່ພຣະເຈົ້າສັ່ງ ແລະບໍ່ແມ່ນຕາມມະນຸດສັ່ງ" (ກິຈການ 5:29).

ບາງຄັ້ງ ການໄວ້ວາງໃຈໃນພຣະເຈົ້າແຕ່ຜູ້ດຽວໃນເມື່ອໝູ່ຝູງທີ່ຢູ່ນຳບໍ່ຍອມໄວ້ວາງໃຈເຊື່ອນຳເຮົາ ກໍເຮັດໃຫ້ພວກເຮົາຮູ້ສຶກອ້າງວ້າງ. ໃນຂນະນັ້ນ ມີແຕ່ໂຢຊວຍເທົ່ານັ້ນທີ່ຮ່ວມກັບກາເຫລັບໄວ້ວາງໃຈໃນພຣະເຈົ້າ. ພວກເຂົາປະຕິເສດບໍ່ໃຫ້ຜູ້ໃດມາຊັກຊວນໃຫ້ພວກເຂົາປະຖິ້ມພຣະເຈົ້າແລະບໍ່ເຊື່ອຟັງພຣະອົງ. ມີຄວາມຮູ້ສຶກວ່າອ້າງວ້າງຈະບໍ່ເປັນຄວາມຄິດທີ່ນຳມາເຮັດໃຫ້ການຕັດສິນໃຈຈະໄວ້ວາງໃຈໃນພຣະເຈົ້າຫລືບໍ່.

- ♦ ມີການທ້າທາຍອັນໃດທີ່ທ່ານປະເຊີນຢູ່ໃນຄວາມເຊື່ອຂອງທ່ານ?
- ♦ ມີສິ່ງໃດແດ່ທີ່ພຣະເຈົ້າປະທານໃຫ້ທ່ານ ເພື່ອຊ່ອຍທ່ານໃຫ້ສຳເຣັດໃນພາຣະທີ່ທ່ານໄດ້ຖືກມອບໝາຍໃຫ້?
- ♦ ເປັນຫຍັງຄົນສ່ວນຫລາຍຈະຖືກທົ່ງລອງໃຫ້ທໍ້ຖອຍເມື່ອປະເຊີນກັບສິ່ງທີ່ມາກີດກັ້ນ?
- ♦ ທ່ານມີບາດກ້າວອັນໃດທີ່ຈະຊ່ອຍໃຫ້ຄວາມເຊື່ອຂອງລູກຂອງທ່ານໃຫ້ເຂັ້ມແຂງຂຶ້ນ?
- ♦ ເປັນຫຍັງຄວາມຢ້ານຈຶ່ງເປັນສັດຕຣູຂອງຄວາມເຊື່ອ?
- ♦ ຢູ່ໃນສະພາບການອັນໃດ ທີ່ພວກເຮົາຈະໃຊ້ຂໍ້ພຣະຄັມພີ "ພວກເຮົາຈະຕ້ອງຊື່ຟັງພຣະເຈົ້າແທນທີ່ຈະເຊື່ອຟັງມະນຸດ"

## ໒. <u>ເຊື່ອໃນພຣະສັນຍາຂອງພຣະເຈົ້າ</u> (ໂຢຊວຍ 14:6-9)

ເມື່ອກາເຫລັບມີອາຍຸສີ່ສິບປີ ລາວໄດ້ **ກັບມາລາຍງານຕໍ່ເພິ່ນຕາມຄວາມເປັນຈິງ** ຕໍ່ໂມເຊກ່ຽວກັບແຜ່ນດິນພຣະສັນຍາ. ເຖິງແມ່ນວ່າຜູ້ທີ່ໄປນຳກັນພາກັນຢ້ານແລະທໍ້ຖອຍເມື່ອເຫັນຄົນໃນເມືອງທີ່ພວກເຂົາຈະເຂົ້າໄປຍຶດເອົານັ້ນ ສຳລັບລາວແລ້ວ ລາວໄດ້ **ເຊື່ອຟັງຢ່າງຊື່ສັດຕໍ່ພຣະຜູ້ເປັນເຈົ້າ.** ລາວມີຄວາມເຊື່ອໝັ້ນວ່າ ໂອກາດມາຮອດແລ້ວທີ່ຈະຮຽກຮ້ອງເອົາໃນສິ່ງທີ່ພຣະເຈົ້າຊົງສັນຍາໃຫ້ແກ່ລາວ. ສີ່ສິບຫ້າປີຕໍ່ມາ ໂອກາດມາຮອດແລ້ວ (ໂຢຊວຍ 14:10). ບັດນີ້ເມື່ອອາຍຸລາວໄດ້ແປດສິບຫ້າປີ ລາວໄດ້ເຕືອນໂຢຊວຍຜູ້ທີ່ໄດ້ສືບຕຳແໜ່ງຈາກໂມເຊກ່ຽວກັບແຜ່ນດິນທີ່ສັນຍາ.

ກາເຫລັບເປັນແບບຢ່າງອັນດີໃຫ້ເຫັນເຖິງຄວາມເຊື່ອໃນພຣະສັນຍາຂອງພຣະເຈົ້າ. ພວກເຮົາສາມາດເຊື່ອໃນພຣະສັນຍາຂອງອົງພຣະຜູ້ເປັນເຈົ້າໄດ້ ເພາະພຣະອົງຊົງເປັນພຣະເຈົ້າ. ພຣະອົງຊົງສັດຊື່ໃນພຣະສັນຍາຂອງພຣະອົງຕລອດມາ. ບາງຄັ້ງພວກເຮົາພາດພັ້ງໃນຊີວິດ ພຣະເຈົ້າຈະບໍ່ເຄີຍຜິດສັນຍາຈັກເທື່ອ.

ເມື່ອພວກເຮົາເບິ່ງຕົວເອງ ພວກເຮົາອາດຈະເຫັນຈຸດອ່ອນຂອງພວກເຮົາ. ເຖິງຢ່າງໃດກໍຕາມ ເມື່ອພວກເຮົາເບິ່ງພຣະເຈົ້າແລ້ວ ພຣະອົງບໍ່ມີຈຸດອ່ອນອັນໃດເລີຍ. ໃນຂນະທີ່ຄົນອື່ນເກີດຄວາມສະດຸດໃນຄວາມເຊື່ອຂອງພວກເຂົາ ເມື່ອຖືກທ້າທາຍຈາກອຸປະສັກອັນໃຫຣ່ຫລວງ ກາເຫລັບສາມາດເວົ້າວ່າ "**ສ່ວນຂ້າພະເຈົ້າເອງໄດ້ເຊື່ອຟັງຢ່າງຊື່ສັດຕໍ່ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງຂ້າພຣະເຈົ້າ.**" ມີຫລາຍຄົນໃນປະຈຸບັນນີ້ຂາດຄວາມສຸກໃນການໄວ້ວາງໃຈໃນພຣະສັນຍາຂອງພຣະເຈົ້າ ເພາະວ່າພວກເຂົາປັກຕາເບິ່ງອຸປະສັກແທນທີ່ຈະປັກຕາເບິ່ງພຣະເຈົ້າ. ຄວາມເຊື່ອອັນແທ້ຈິງບໍ່ແມ່ນເຊື່ອໃນມື້ນີ້ແລ້ວ ມື້ໜ້າຄວາມເຊື່ອກໍຈືດໄປ. ບໍ່ແມ່ນໄດ້ຍິນພຣະເຈົ້າເວົ້າອັນໃດອັນນຶ່ງແລ້ວໃຫ້ອາລົມພາເຊື່ອ. ກິຣິຍາທ່າທີຂອງພວກເຮົາເປັນພຍານໃຫ້ເຫັນຄວາມເຊື່ອຂອງພວກເຮົາ.

ພວກເຮົາຈະເຫັນວ່າ ພວກເຮົາໄວ້ວາງໃຈໃນພຣະເຈົ້າຫລາຍປານໃດ ໃຫ້ເບິ່ງນິສັຍໃນການຈັບຈ່າຍຂອງພວກເຮົາເອງ. ຍົກຕົວຢ່າງ ບາງຄົນບໍ່ຖວາຍສິບເປີເຊັນ ເພາະຢ້ານວ່າຈະບໍ່ມີເງິນພຽງພໍທີ່ຈະໄປຈ່າຍຄ່ານ້ຳ ຄ່າໄຟ ແລະອື່ນໆ. ແຕ່ພຣະເຈົ້າຊົງສັນຍາວ່າ ພຣະອົງຈະຖອກແທ້ພຣະພອນອັນລົ້ນເຫລືອໃຫ້ ຖ້າພວກເຮົາຫາກເຊື່ອຟັງພຣະອົງ (ມາລາກີ 3:10). ຄຳຖາມກໍຄືວ່າ ຂ້າພະເຈົ້າມີຄວາມໄວ້ວາງໃຈໃນພຣະເຈົ້າພໍບໍ່ວ່າ ພຣະອົງຈະເບິ່ງແຍງຂ້າພະເຈົ້າ ຖ້າຫາກວ່າຂ້າພະເຈົ້າຖວາຍໃຫ້ພຣະອົງໃນສິ່ງທີ່ເປັນຂອງພຣະອົງ?

ພຣະເຈົ້າຊົງຮ້ອງແຕ່ລະຄົນໃຫ້ໄປປະກາດ. ປະຈຸບັນນີ້ມີປະມານສິບພັນຄົນໄດ້ອອກໄປຮັບໃຊ້ໃນພັນທະກິດຂອງພຣະອົງ ໂດຍຜ່ານທາງກອງປະກາດອະເມຣິກາພາກເຫນືອ ແລະກອງປະກາດຕ່າງປະເທດ ຫລາຍຄົນກໍບໍ່ເຊື່ອຟັງເພາະວ່າພວກເຂົາໄດ້ຖາມວ່າ ພຣະເຈົ້າຈະເບິ່ງແຍງຄອບຄົວແລະຕົວຂອງເຂົາເອງຫລືບໍ່? ແຕ່ພວກເຮົາໄດ້ຮັບພຣະສັນຍາ ພຣະອົງຈະຕ້ອງຕອບຄຳຮ້ອງຂໍຂອງພວກເຮົາສເມີ. ໜ້າໂສກເສົ້າຫລາຍ ມີຫລາຍຄົນບໍ່ໄດ້ຮຽກຮ້ອງຂໍພຣະອົງໃຫ້ຊ່ອຍພວກເຂົາ ເພາະວ່າພວກເຂົາບໍ່ໄວ້ວາງໃຈໃນພຣະສັນຍາຂອງພຣະອົງວ່າ ພຣະອົງຈະປະທານຊີວິດອັນຕລອດໄປເປັນນິດ (ໂຢຮັນ 3:16). ຂາດຄວາມເຊື່ອໃນພຣະສັນຍາຂອງພຣະເຈົ້າສາມາດໄດ້ຮັບເຄາະອັນຕລອດໄປເປັນນິດ.

♦ ຊີວິດຂອງທ່ານໄດ້ສະແດງອອກໃຫ້ເຫັນວ່າ ທ່ານໄດ້ເຊື່ອໃນພຣະສັນຍາຂອງພຣະເຈົ້າໄດ້ຢ່າງໃດ?
♦ ທ່ານມີບາດກ້າວອັນໃດທີ່ຈະເຮັດໃຫ້ທ່ານເຊື່ອຟັງພຣະເຈົ້າດ້ວຍຄວາມຊື່ສັດ?
♦ ມີພຣະສັນຍາຂໍ້ໃດຂອງພຣະຜູ້ເປັນເຈົ້າທີ່ທ່ານໄດ້ສູນໃສ່ໃນອາທິດທີ່ຜ່ານມາ? ອາທິດຕໍ່ໄປເດ? ດ້ວຍເຫດໃດ?
♦ ກິຣິຍາທ່າທີ່ຂອງທ່ານໄດ້ຊີ້ໃຫ້ເຫັນຄວາມເຊື່ອຂອງທ່ານຢ່າງໃດ?
♦ ພຣະເຈົ້າໄດ້ໃຊ້ທ່ານໄປຮັບໃຊ້ຢູ່ບ່ອນໃດແດ່?

## 3. <u>ຈົ່ງເຊື່ອຟັງຢູ່ສເມີ</u> (ໂຢຊວຍ 14:10-14)

ກາເຫລັບໄດ້ເຊື່ອຟັງພຣະເຈົ້າຕລອດຊີວິດຂອງລາວ. ພຣະເຈົ້າຊົງອວຍພອນລາວໃຫ້ມີສຸຂພາບອັນເຂັ້ມແຂງ. ເມື່ອອາຍຸລາວໄດ້ 85 ປີ , ຫລັງຈາກ 45 ປີ ລາວຍັງຄົງໄວ້ວາງໃຈພຣະເຈົ້າຢູ່ຕລອດມາ, ລາວໄດ້ບັນລະຍາຍເຖິງຄວາມແຂງແຮງໂດຍກ່າວວ່າ "**ດຽວນີ້ຂ້າພະເຈົ້າມີອາຍຸແປດສິບຫ້າປີແລ້ວ ແລະຍັງແຂງແຮງຢູ່ ດັ່ງຄາວທີ່ໂມເຊໄດ້ໃຊ້ຂ້າພະເຈົ້າອອກໄປນັ້ນ.**" ເມື່ອກາເຫລັບມີອາຍຸໄດ້ແປດສິບຫ້າປີແລ້ວ ລາວຍັງແຂງແຮງຢູ່ເພື່ອລາວຈະອອກຕີເສິກ ເໝືອນດັ່ງໃນຄາວລາວມີອາຍຸສີ່ສິບປີ. ພຣະເຈົ້າຊົງປົກປ້ອງໃຫ້ສຸຂພາບຂອງລາວແຂງແຮງ ແລະລາວຕຽມພ້ອມທີ່ຈະໄປຕີເອົາເມືອງ **ເຮັບໂຣນ**. ເມືອງ **ເຮັບໂຣນ** ເປັນເມືອງນ້ອຍຢູ່ທາງໃຕ້ຂອງເມືອງເຢຣູຊາເລັມປະມານ 25 ໄມລ ຊຶ່ງເປັນດິນແດນເຂດ **ພູດອຍ** ຂອງຢູດາ. ໂຢຊວຍເຄີຍຕີເອົາເມືອງນີ້ແລ້ວ ໃນຂນະທີ່ພວກເຂົາເຂົ້າຢຶດເອົາແຜ່ນດິນພຣະສັນຍາ (ໂຢຊວຍ 10:36-37). ເບິ່ງເຫມືອນກັບວ່າຫລັງຈາກນັ້ນ ຊາວເມືອງນີ້ເຂົ້າມາຢູ່ຄືນ. ເມື່ອກາເຫລັບຮ້ອງຂໍ ໂຢຊວຍກໍອະນຸຍາດໃຫ້ກາເຫລັບໄປຕີເອົາເມືອງນັ້ນຄືນມາຈາກ **ເຊື້ອຊາດຂອງຄົນຮ່າງໃຫຣ່ຊື່ວ່າອານາກິມ**. ສີ່ສິບປີກ່ອນນັ້ນ

ຊາວອິສຣາເອນຢ້ານພວກເຂົາຫລາຍຈົນບໍ່ເຊື່ອຟັງພຣະເຈົ້າ ແລະບໍ່ໄວ້ວາງໃຈໃນພຣະອົງທີ່ຈະໄປຕີເອົາເມືອງຂອງພວກເຂົາ. ເຖິງແມ່ນວ່າລາວມີອາຍຸແປດສິບຫ້າປີແລ້ວ ບໍ່ພຽງແຕ່ສຸຂພາບຂອງລາວຍັງແຂງແຮງຢູ່ ລາວສະແດງໃຫ້ເຫັນວ່າຄວາມຮູ້ສຶກແລະວິນຍານຂອງລາວກໍແຂງແຮງດ້ວຍ. ພວກເຮົາສາມາດເຫັນໄດ້ຈາກການປະກາດຂອງລາວ **"ບັດນີ້ຂໍທ່ານຈົ່ງມອບດິນແດນທາງເຂດພູດອຍໃຫ້ຂ້າພະເຈົ້າສາ ເພາະພຣະຜູ້ເປັນເຈົ້າໄດ້ສັນຍາໄວ້ກັບຂ້າພະເຈົ້າໃນມື້ທີ່ຂ້າພະເຈົ້າແລະຄົນຂອງຂ້າພະເຈົ້າໄດ້ລາຍງານ."**

ດ້ວຍຄວາມເຊື່ອຟັງພຣະເຈົ້າ ຄວາມເຊື່ອຂອງກາເຫລັບຈເຣີນຂຶ້ນໄປເລື້ອຍໆຕາມອາຍຸຂອງລາວ. ການຕິດຕາມພຣະເຈົ້າໃນຄວາມເຊື່ອເປັນການຕໍ່ເນື່ອງກັນໄປ ບໍ່ແມ່ນເທື່ອດຽວແລ້ວກໍແລ້ວໄປ. ການໄວ້ວາງໃຈໃນພຣະເຈົ້າດ້ວຍສຸດຈິດສຸດໃຈ ບາງຄັ້ງຕ້ອງມີຄວາມອົດທົນດົນນານ. ຄວາມເຊື່ອຂອງຜູ້ທີ່ເຊື່ອອາດຈະຈືດຈາງໄປ. ເຖິງແມ່ນວ່າພວກເຮົາເຮັດໃຫ້ພຣະເຈົ້າພາດຫວັງ ແຕ່ພຣະອົງບໍ່ເຄີຍເຮັດໃຫ້ພວກເຮົາພາດຫວັງຈັກເທື່ອ.

ໃນຊີວິດຂອງກາເຫລັບ ລາວຈະບໍ່ໃຫ້ຜູ້ໃດມານາບຂູ່ລາວ. ຕັ້ງແຕ່ຄາວລາວຍັງໜຸ່ມ ລາວຈະບໍ່ໃຫ້ພວກສອດແນມຈຳນວນຫລາຍຄົນທີ່ບໍ່ເຫັນພ້ອມກັບລາວມາຫ້າມການຕັດສິນໃຈເຂົ້າຢຶດແຜ່ນດິນພຣະສັນຍາ. ໃນປະຈຸບັນກໍເຊັ່ນກັນລາວຈະບໍ່ໃຫ້ເຊື້ອຊາດຂອງຄົນຮ່າງໃຫຍ່ມານາບຂູ່ໃຫ້ລາວຢ້ານ ເພື່ອຈະບໍ່ໃຫ້ລາວມີຄວາມກ້າເຂົ້າໄປຢຶດເອົາແຜ່ນດິນພຣະສັນຍາ. ລາວຮຽກຮ້ອງເອົາພຣະສັນຍາທີ່ພຣະອົງເຄີຍສັນຍາໄວ້ແຕ່ຄາວລາວຍັງໜຸ່ມ ແລະໂຢຊວຍກໍ **ເລີຍມອບເມືອງເຮັບໂຣນໃຫ້ເປັນກັມມະສິດຂອງລາວ.** ຄວາມສຸກເປັນຂອງກາເຫລັບທີ່ລາວໄດ້ຮັບແຜ່ນດິນທີ່ພຣະເຈົ້າໄດ້ສັນຍາວ່າຈະໃຫ້ຊາດອິສຣາເອນຕັ້ງແຕ່ສີ່ສິບຫ້າປີກ່ອນນັ້ນມາເປັນກັມມະສິດຂອງລາວ. ພຣະເຈົ້າຊົງໃຫ້ກຽດໃນຄວາມເຊື່ອອັນໝັ້ນຄົງຂອງລາວ.

- ♦ ທ່ານມີບາດກ້າວອັນໃດທີ່ຈະເຮັດໃຫ້ທ່ານສາມາດເຊື່ອຟັງພຣະເຈົ້າຢູ່ສເມີ?
- ♦ ພຣະເຈົ້າຊົງອວຍພອນສຸຂພາບຂອງກາເຫລັບ; ພຣະເຈົ້າຊົງອວຍພອນທ່ານອັນໃດແດ່?
- ♦ ຖ້າຄົນອື່ນເບິ່ງຊີວິດຂອງທ່ານ ເຂົາຈະເຫັນໄດ້ຢ່າງໃດວ່າທ່ານເຊື່ອຟັງພຣະເຈົ້າຢູ່ສເມີ?
- ♦ ມີອັນໃດບົ່ງບອກໃຫ້ເຫັນຄວາມເຂັ້ມແຂງທາງຝ່າຍຈິດວິນຍານຂອງທ່ານ?
- ♦ ທ່ານມີບາດກ້າວອັນໃດທີ່ຈະເຮັດໃຫ້ຄວາມເຊື່ອຂອງທ່ານຈເຣີນຂຶ້ນໄປເລື້ອຍໆ?
- ♦ ທ່ານຈະເຮັດຢ່າງໃດ ເພື່ອຫລີກລ້ຽງບໍ່ໃຫ້ຄົນມານາບຂູ່ທ່ານ?
- ♦ ທ່ານຈະສາມາດເຮັດຢ່າງໃດ ເພື່ອໃຫ້ທ່ານມີຄວາມເຊື່ອຟັງພຣະເຈົ້າຫລາຍຂຶ້ນ?
- ♦ ຊີວິດຂອງທ່ານຈະເປັນທີ່ໃຫ້ການໜູນໃຈຄົນອື່ນໄດ້ຢ່າງໃດ?

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org